ພາສາລາວ - ບົດສະເໜີ ປະຈໍາປີ 2017

## ຈົ່ງພ້ອມກັນເປີດຫົນທາງແຫ່ງຄວາມຫວັງ

ໃນເດືອນກັນຍາ 2016, ໄດ້ມີກຸ່ມສະແຫວງບຸນແຫ່ງຄວາມໄວ້ໃຈ ເຊິ່ງລວມມີໄວໜຸ່ມຈໍານວນ 7500 ຄົນຈາກ ທະວີບອາຟຣິກາ. ຫົວຂໍ້ໃນການຊຸມນຸມຄັ້ງນີ້ ຈະເປັນການສ້າງແຮງບັນດານໃຈໃຫ້ແກ່ພວກເຮົາຕະຫຼອດປີ 2017ນີ້: ຈົ່ງພ້ອມກັນ - ບໍ່ໄດ້ຢູ່ໂດດດ່ຽວ, ແຕ່ໃຫ້ເກື້ອໜູນເຊິ່ງກັນແລະກັນ - ພວກເຮົາສາມາດເປີດຫົນທາງແຫ່ງຄວາມຫວັງ - ໃຫ້ແກ່ພວກເຮົາ, ຄົນທີ່ຢູ່ອ້ອມຂ້າງເຮົາ ແລະ ສໍາລັບບັນດາຄອບຄົວຕ່າງໆ.

ໜຶ່ງໃນຄໍາຖາມທີ່ຖືກຖາມທີ່ເມືອງ ໂກໂຕນູ ແມ່ນ: "ເພື່ອຟື້ນຟູຄວາມຫວັງຂອງພວກເຮົາ, ພວກເຮົາຈະປະຖິ້ມທັດສະນະຄະຕິເສີຍເມີຍໄດ້ແນວໃດ ທ່າມກາງການລໍຄອຍສໍາລັບການປ່ຽນແປງຈາກພາຍນອກ? ຄໍາໝັ້ນສັນຍາປະເພດໃດທີ່ພວກເຮົາຈະສາມາດເຂົ້າເຖິງໄດ້?"

ມັນເປັນສິ່ງທີ່ຮີບດ່ວນສໍາລັບຜູ້ຄົນທີ່ຢູ່ທະວີບຕ່າງໆ ເພື່ອຮັບຟັງບັນດາເພື່ອນມະນຸດໃນທະວີບອາຟຼິກກາ ຜູ້ທີ່ຫິວໂຫຍຄວາມຍຸດຕິທໍາລະຫວ່າງຄວາມສໍາພັນທາງການເມືອງແລະເສດຖະກິດ: ເຊິ່ງນັ້ນແມ່ນໜຶ່ງໃນເງື່ອນໄຂສໍາລັບພວກເຂົາທີ່ຈະປະເຊີນກັບຄວາມຈິງໃນອະນາຄົດໃນປະເທດຂອງເຂົາເອງ.

ເພື່ອເປັນການຕຽມຕົວເພື່ອອະນາຄົດ, ໄວໜຸ່ມຢ່າງຫຼວງຫຼາຍໃນອາຟຣິກກາ ຕ້ອງການຢາກຈະນໍາໃຊ້ສັກກະຍະພາບທີ່ພວກເຂົາມີເຊິ່ງມາຈາກພຣະເຈົ້າ. ເພື່ອວ່າພວກເຂົາຈະສາມາດປຸກລະດົມໄວໜຸ່ມຄົນອື່ນໃນໂລກນີ້ທີ່ຕົກໃນສະຖານະການດຽວກັນໄດ້.

ເພື່ອເປັນການສືບຕໍ່, ໃນໝູ່ບ້ານເທເຊ ແລະ ທົ່ວທຸກມຸມໂລກ, ການໄຕ່ຕອງໄດ້ເລີ່ມຂຶ້ນທີ່ເມືອງ ໂກໂຕນູ, ແລະຕໍ່ໄປນີ້ແມ່ນ 4 ບົດສະເໜີເພື່ອນໍາພວກເຮົາໄປສູ່ການເປີດຫົນທາງແຫ່ງຄວາມຫວັງ.

ພວກເຮົາຈະພະຍາຍາມຊອກຫົນທາງເພື່ອທີ່ຈະໜູນໃຊ້ບົດສະເໜີນີ້ເຂົ້າໃນການປະຕິບັດຕົວຈິງແບບງ່າຍດາຍ, ໜຶ່ງໃນສາມຄວາມເປັນຈິງ - ຮ່ວມກັບຄວາມຊື່ນຊົມຍິນດີ ລະ ພຣະເມດຕາກາລຸນາ - ບຣາເດີ້ ໂຣເຈີ້ ຕ້ອງການທີ່ຈະເຮັດໃຫ້ສິ່ງເຫຼົ່ານີ້ເປັນໝາກຫົວໃຈຂອງການດໍາລົງຊີວິດຂອງຊຸມຊົນໝູ່ບ້ານເທເຊ.

ບຣາເດີ້ ອະຣອຍ

## ບົດສະເໜີ ທີ່ໜຶ່ງ: ຍຶດໝັ້ນໃນຄວາມຫວັງ; ມັນແມ່ນສິ່ງທີ່ສ້າງສັນ

*ຄວາມຫວັງເພື່ອຄວາມຫວັງທັງໝົດ, ທ່ານອັບບຣາຮາມເຊື່ອໄວ້ໃຈ ແລະ ນັ້ນກໍ່ເປັນຈິງເພິ່ນໄດ້ເປັນບິດາຂອງປະຊາຊາດທັງຫຼາຍ (ໂຣມ 4:18)*

*ຄວາມຫວັງນີ້ແມ່ນໃຫ້ເຮົາຍຶດໄວ້ຄືດັ່ງສະໝໍຂອງຈິດວິນຍານ. ມັນເປັນຄວາມຫວັງທີ່ແນ່ນອນແລະໝັ້ນຄົງ. (ເຮບູ 6:19)*

*ຜູ້ໜຶ່ງຜູ້ໃດບໍ່ໄດ້ຮັບອານາຈັກຂອງພຣະເຈົ້າເໝືອນດັ່ງເດັກນ້ອຍ ຜູ້ນັ້ນຈະເຂົ້າໃນອານາຈັກນັ້ນບໍ່ໄດ້. (ລູກາ 18:17)*

ໃນຄວາມບໍ່ໝັ້ນຄົງຂອງໂລກປະຈຸບັນ, ພວກເຮົາໄດ້ຮັບຜົນກະທົບຈາກຄວາມຮຸນແຮງ, ຄວາມທໍລະມານ ແລະ ຄວາມອະຍຸດຕິທໍາ. ຊັບພະສິ່ງທັງມວນຮ້ອງຄວນຄາງ, ຄືດັ່ງພວກມັນກໍາລັງຜ່ານຜ່າຄວາມເຈັບປວດຄືດັ່ງການເກີດລູກ. ພຣະຈິດເຈົ້າກໍ່ເຊັ່ນດຽວກັນ, ເຊິ່ງແມ່ນພຣະຈິດອົງດຽວທີ່ກໍາລັງອຸ້ມຊູຄວາມຫວັງຂອງພວກເຮົາຢູ່ (ເບິ່ງ ໂຣມ 8:22,26). ພວກເຮົາຈະເຮັດແນວໃດ?

ຄວາມເຊື່ອແມ່ນຄວາມໄວ້ໃຈທີ່ລຽບງ່າຍ(ສາມັນ)ໃນພຣະເຈົ້າ. ມັນບໍ່ແມ່ນຄໍາຕອບຕາຍໂຕ, ແຕ່ເຮັດໃຫ້ມັນເປັນໄປໄດ້ສໍາລັບເຮົາ ເພື່ອຈະບໍ່ໃຫ້ເຮົາຢຸດນິ້ງຍ້ອນຄວາມຢ້ານ ຫຼື ເສຍກໍາລັງໃຈ. ມັນຈະນໍາເຮົາໄປມີສ່ວນຮ່ວມໃນການເດີນທາງ. ຍ້ອນແນວນັ້ນ

ພວກເຮົາຈຶ່ງຮັບຮູ້ວ່າ ພຣະວາຈາໄດ້ໄຂຂອບຟ້າອັນແສນກວ້າງໃຫຍ່ແຫ່ງຄວາມຫວັງທີ່ເໜືອກວ່າທຸກໆຄວາມຫວັງ.

ຄວາມຫວັງນີ້ບໍ່ແມ່ນການເບິ່ງໂລກໃນແລ່ດີ ທີ່ຈະປິດດວງຕາເຮົາໃນໂລກແຫ່ງຄວາມເປັນຈິງ, ແຕ່ມັນແມ່ນສະໝໍທີ່ຍຶດໝັ້ນພວກເຮົາໄວ້ນຳພຣະເຈົ້າ. ມັນແມ່ນສິ່ງສ້າງສັນ. ພວກເຮົາໄດ້ເຫັນສັນຍານຂອງມັນແລ້ວໃນວ່າງເປົ່າ - ໃນສະຖານທີ່ຕ່າງໆບົນແຜ່ນດິນນີ້.

ພວກເຮົາກ້າທີ່ຈະເຊື່ອໃນອົງພຣະຈິດເຈົ້າໃນດວງໃຈຂອງເຮົາແລະໃນໂລກນີ້ບໍ? ພວກເຮົາສາມາດເອື່ອຍອີງການມີຢູ່ຈິງຂອງອົງພຣະຈິດ ທັງທີ່ເຮົາບໍ່ສາມາດແນມເຫັນດ້ວຍຕາເປົ່າບໍ?

ຂໍໃຫ້ຄວາມເຊື່ອຂອງພວກເຮົາຄົງໄວ້ເຊິ່ງຄວາມທຳມະດາ, ຄືດັ່ງຄວາມໄວ້ໃຈຂອງເດັກນ້ອຍ! ນີ້ບໍ່ໄດ້ໝາຍຄວາມວ່າ ແມ່ນການຫົດນ້ຳໃສ່ຄວາມເຊື່ອ, ແຕ່ໃຫ້ຍຶດໝັ້ນເຖິງສິ່ງທີ່ເປັນສູນກາງ - ນັ້ນຄືຄວາມຮັກຂອງພຣະເຈົ້າທີ່ມີຕໍ່ມະນຸດ ແລະ ຊັບພະສິ່ງໃນໂລກ. ພຣະຄຳພີໄດ້ກ່າວເຖິງເລື່ອງເຫຼົ່ານີ້, ຈາກຮ່າງກາຍທີ່ເປືອຍເປົ່າໃນເບື້ອງຕົ້ນ ມາສູ່ຄວາມຫຍຸ້ງຍາກລຳບາກ, ຈົນມະນຸດໄດ້ຫຼົງຜິດບໍ່ເຊື່ອໃນພຣະເຈົ້າ. ພຣະເຈົ້າບໍ່ເຄີຍທີ່ຈະຢຸດເຊົາ/ເມື່ອຍ ທີ່ຈະຮັກ: ຂໍໃຫ້ຂໍ້ຄວາມນີ້ເປັນສິ່ງຍຶດໝັ້ນຄວາມຫວັງຂອງພວກເຮົາໄວ້!

ເພື່ອໃຫ້ພວກເຮົາແລະຜູ້ທີ່ຢູ່ໃກ້ຊິດນຳເຮົາ ໄດ້ຊຶມຊັບກັບຂໍ້ຄວາມນີ້, ພວກເຮົາຕ້ອງໄດ້ເຕົ້າໂຮມກັນເພື່ອພາວະນາຫຼາຍຂຶ້ນ. ການພາວານາແບບງ່າຍດາຍແລະສວຍງາມນີ້ຈະຊ່ວຍໃຫ້ເຮົາໄດ້ໄຕ່ຕອງບາງສິ່ງບາງແນວກ່ຽວກັບຂໍ້ເລິດລັບຂອງພຣະເຈົ້າ ແລະສາມາດນຳພາເຮົາໄປພົບກັບພຣະເຈົ້າແບບສ່ວນຕົວໄດ້.

## ບົດສະເໜີ ທີ່ສອງ: ເຮັດໃຫ້ຊີວິດເຮົາງ່າຍດາຍຂຶ້ນເພື່ອຈະແບ່ງປັນ

*ພຣະເຢຊູເຈົ້າຊົງຕຣັດວ່າ: ເຮົາມີໃຈສຸພາບອ່ອນຫວານແລະຖ່ອມຕົວ (ມັດເທວ 11:29)*

*ທ່ານໄດ້ຮັບມາລ້າໆ ກໍຈົ່ງໃຫ້ລ້າໆ (ມັດເທວ 10:9)*

*ພຣະເຢຊູເວົ້າກັບເສດຖີໜຸ່ມວ່າ: ຈົ່ງໄປຂາຍຊັບສິນບັດຂອງເຈົ້າແລ້ວເອົາໃຫ້ຄົນທຸກເສຍ....ແລ້ວຈົ່ງຕິດຕາມເຮົາມາ (ມັດເທວ 19:21)*

ຄວາມໂລບມາກ - ການແຂ່ງຂັນເພື່ອເງິນແລະຄວາມສຳເລັດ- ນຳພາໄປຫາຄວາມອະຍຸດຕິດທຳແລະຄວາມຜິດຫວັງ. ຈິດວິນຍານແຫ່ງການແບ່ງປັນ, ເຊິ່ງພຣະວໍລະສານໄດ້ເຊື້ອເຊີນເຮົາໃຫ້ປ່ຽນແປງ, ເຊິ່ງແມ່ນໜຶ່ງໃນຫົນທາງແຫ່ງຄວາມຫວັງ ທີ່ພວກເຮົາຕ້ອງໄດ້ເປີດຫົນທາງໃນວັນນີ້.

ການເລືອກຫົນທາງຊີວິດທີ່ລຽບງ່າຍ ແມ່ນທີ່ມາຂອງອິດສະລະພາບແລະຄວາມຊື່ນຊົມຍິນດີ ຈາກນັ້ນຊີວິດກໍ່ຈະປາສະຈາກຄວາມລຳບາກ.

ຄວາມລຽບງ່າຍສະແດງໃຫ້ເຫັນເຖິງຄວາມໂປ່ງໃສຂອງຫົວໃຈ. ເຖິງແມ່ນວ່າບໍ່ແມ່ນໃຈງ່າຍ ແຕ່ກໍ່ປະຕິເສດທີ່ຈະໄວ້ວາງໃຈ. ເຊິ່ງມັນກົງກັນຂ້າມກັບຄວາມບໍ່ຊື່ກົງ (ການຕີສອງໜ້າ). ມັນຈະຊ່ວຍໃຫ້ເຮົາສາມາດເຈລະຈາກັບຄົນອື່ນທີ່ເຮົາພົບພໍ້ ໂດຍປາສະຈາກຄວາມຢ້ານກົວໄດ້. ຊີວິດຂອງອົງພຣະເຢຊູເຈົ້າແມ່ນຕົວຢ່າງທີ່ດີສຳລັບເຫດການແບບນີ້.

ເນື່ອງຈາກວັດຖຸພາຍນອກໃນຍຸກນີ້ມາແຮງ, ໃຫ້ພວກເຮົາສືບຕໍ່ເປັນແບບຢ່າງໃນການດຳລົງຊີວິດແບບລຽບງ່າຍ. ນີ້ມັນຈະເປັນແຮງບັນດານໃຈໃຫ້ເຮົາໄດ້ສະແດງເຖິງການແບ່ງປັນ ໃນຮູບໂສມຂອງການຫົນທຸກຂອງມະນຸດ, ຄວາມທຸກຈົນແບບບໍ່ມີກຽດ, ຊາວອົບພະຍົກ ຫຼື ການຂັດແຍ່ງໃນໂລກນີ້.

ໃຫ້ພວກເຮົາຊອກຫາຫົນທາງທີ່ຈະເກື້ອໜູນກັນແລະກັນ ໂດຍການຮັບຮູ້ເຖິງຄວາມກ້າຫານ ທີ່ເປັນສັນຍານແຫ່ງຄວາມຫວັງຂອງເພື່ອນມະນຸດເຮົາ. ໃນສະຖານທີ່ທີ່ເຮົາເຮັດວຽກຫຼືຮໍ່າຮຽນ ໂດຍຄວາມມຸ່ງໝັ້ນທາງສັງຄົມແລະສິ່ງແວດລ້ອມ.

ພວກເຮົາຈະຢູ່ຮ່ວມກັນກັບຊັບພະສິ່ງແບບສັນຕິ ໂດຍຜ່ານຊີວິດແບບລຽບງ່າຍແລະບໍ່ແຕກແຍກໄດ້ແນວໃດ, ການມີສ່ວນ

ຮ່ວມໃນການຕໍ່ຕ້ານກັບໄພພິບັດທາງນິເວດວິທະຍາ ແລະ ພາວະໂລກຮ້ອນ? ການຕໍ່ສູ້ເຫຼົ່ານີ້ບໍ່ແມ່ນວຽກຂອງຜູ້ນຳນານາຊາດແຕ່ຝ່າຍດຽວ; ພວກເຮົາທຸກຄົນສາມາດເຮັດໄດ້, ຍົກຕົວຢ່າງ, ການບໍລິໂພກຜະລິດຕະພັນທ້ອງຖິ່ນ, ການນຳໃຊ້ລົດໂດຍສານ ແລະອື່ນໆ..

ຄຳຖາມເຫຼົ່ານີ້ຄົງຄ້າງຢູ່ໃນໃຈເຮົາບໍ: ພວກເຮົາພ້ອມທີ່ຈະຕິດຕາມພຣະກຣິສໂຕເຈົ້າບໍ, ຜູ້ເຊິ່ງມີຈິດໃຈອ່ອນນອມແລະຖ່ອມຕົວ, ເລືອກທີ່ຈະເປັນຂອງພຣະອົງຕະຫຼອດໄປໃນຄຳເວົ້າທີ່ງ່າຍດາຍວ່າ ໂດຍ, ໃນຈິດວິນຍານແຫ່ງຄວາມເອື້ອເຟື້ອເຜື່ອແຜ່ບໍ?

## ບົດສະເໜີ ທີ່ສາມ: ເຮົາມາລວມກັນເພື່ອເຮັດໃຫ້ພຣະວາຈາຂອງພຣະເຈົ້າຊົງເປີດເຜີຍ

*ທຸກໆວັນ ພວກເຂົາໄດ້ຮ່ວມໃຈກັນໄປໃນພຣະວິຫານ ແລະ ຫັກຂະໜົມປັງຕາມບ້ານຂອງເຂົາຮ່ວມຮັບປະທານອາຫານດ້ວຍຄວາມຊື່ນຊົມຍິນດີແລະດ້ວຍຈິງໃຈ (ກິດຈະການ 2:46)*

*ຂອງປະທານນັ້ນມີແຕກຕ່າງກັນ, ແຕ່ມີພຣະຈິດເຈົ້າອົງດຽວກັນ. ວຽກງານຮັບໃຊ້ມີແຕກຕ່າງກັນແຕ່ພວກເຮົາຮັບໃຊ້ພຣະເຈົ້າອົງດຽວກັນ (1ໂກລິນໂທ 12:4-7)*

*ຢ່າລະເລີຍທີ່ຈະຕ້ອງຮັບຄົນແປກໜ້າ, ເພາະວ່າໂດຍການກະທຳເຊັ່ນນັ້ນ ບາງຄົນໄດ້ຕ້ອນຮັບທູດສະຫວັນແບບບໍ່ຮູ້ໂຕ (ເຮບູ 13:2)*

ໃນພຣະຄຳພີໄດ້ເວົ້າເຖິງເລື່ອງລາວຂອງຊາຍສອງຄົນ, ປີເຕີ ແລະ ໂຄເນລີອັດ, ຜູ້ເຊິ່ງບໍ່ລົງລອຍກັນ ແຕ່ພວກເຂົາໄດ້ພົບພໍ້ກັນ ແລະໄດ້ຄົ້ນພົບຄວາມຈິງທີ່ເປັນປິດສະໜາສຳລັບເຂົາໃນເມື່ອກ່ອນ. ພວກເຂົາຕ້ອງໄດ້ມາຢູ່ຮ່ວມກັນເພື່ອທຳຄວາມເຂົ້າໃຈວ່າ ພຣະຈິດເຈົ້າໄດ້ທຳລາຍກຳແພງ ແລະ ເຕົ້າໂຮມຜູ້ທີ່ຄິດວ່າພວກເຂົາເປັນຄົນແປກໜ້າ. ພຣະວາຈາຂອງພຣະເຈົ້າຈະເປີດເຜີຍ ເມື່ອພວກເຮົາຢູ່ຮ່ວມກັນ. (ອ່ານກິດຈະການຂອງອັກຄະສາວົກ ຂໍ້ 10ແລະ11)

ເມື່ອຄຣິສຕຽນແຕກແຍກ, ລະຫວ່າງນິກາຍຕ່າງໆ ຫຼື ຢູ່ພາຍໃນພຣະກຣິສຕະຈັກດຽວກັນ, ຂໍ້ຄວາມໃນພຣະຄຳພີຖືກປົດບັງ. ພວກເຮົາສາມາດເດີນທາງຮ່ວມກັນໂດຍທີ່ບໍ່ໃຫ້ຄວາມແຕກຕ່າງມາແຍກພວກເຮົາໄດ້ບໍ? ຖ້າພວກເຮົາທີ່ເປັນຄຣິສຕຽນ, ຊອກຫາຫົນທາງທີ່ຈະສະແດງໃຫ້ເຫັນການຮ່ວມກັນເປັນໜຶ່ງໃນຄວາມແຕກຕ່າງຂອງພວກເຮົາ, ພວກເຮົາຈະຊ່ວຍມະນຸດຊາດ ໃຫ້ຮວມເປັນຄອບຄົວດຽວກັນ.

ພຣະເຢຊູເຕົ້າໂຮມຊາຍ ແລະ ຍິງ, ເດັກນ້ອຍ ແລະ ຜູ້ສູງອາຍຸ, ທຸກຊາດທຸກພາສາ ລວມທັງບັນດາປະເທດທີ່ເຄີຍບໍ່ລົງລອຍກັນ ເຂົ້າເປັນໜຶ່ງດຽວ. ໃຫ້ພວກເຮົາຊອກຫົນທາງທີ່ງ່າຍດາຍທີ່ຈະສະແດງໃຫ້ເຫັນຄວາມເປັນໜຶ່ງດຽວນີ້ໃນບ່ອນທີ່ພວກເຮົາອາໄສຢູ່.

ເພື່ອຄວາມຢູ່ລອດ, ທຸກໆຊຸມຊົນຖືກເຊື້ອເຊີນໃຫ້ອອກຈາກຕົນເອງ. ພວກເຮົາສາມາດປ່ຽນແປງທັດສະນະຄະຕິແຫ່ງຄວາມໃຈກວ້າງໄດ້ບໍ? ໃນພາບລັກຂອງພຣະເຈົ້າ, ຕໍ່ຄົນຄຣິສຕຽນຜູ້ທີ່ມີຊັ້ນຕຳແໜ່ງແຕກຕ່າງຈາກເຮົາ? ການເປີດດວງໃຈມັນຮຽກຮ້ອງເຖິງຄວາມມຸ່ງມານະແຫ່ງການແປ, ເນື່ອງຈາກຄວາມແຕກຕ່າງຂອງຄວາມເຊື່ອແລະຄວາມສັດທາ ກໍປຽບດັ່ງພາສາຕ່າງດ້າວສຳລັບກັນແລະກັນ.

ເຖິງແມ່ນວ່າຄວາມຊົງຈຳຂອງການບໍ່ລົງລອຍກັນລະຫວ່າງຊາວຄຣິສຕຽນ ໄດ້ເຮັດໃຫ້ມີການແຕກແຍກໃນປະຫວັດສາດຍັງຄົງສືບຕໍ່ຢູ່ ແລະ ບໍ່ສາມາດແກ້ໄຂໄດ້ເທື່ອ, ພວກເຮົາສາມາດຕ້ອນຮັບກັນແລະກັນໄດ້ຫຼືບໍ່, ໂດຍການໃຫ້ອະໄພ, ແລະ ປາສະຈາກການກຳນົດຜູ້ໃດຜິດ ຫຼື ຜູ້ໃດຖືກ? ມັນຈະບໍ່ເກີດມີການຄືນດີໄດ້ຖ້າປາສະຈາກການເສຍສະຫຼະ.

ຄວາມເອື້ອຍເຟື້ອເຜື່ອແຜ່ມາພ້ອມໆກັບການຢັ່ງຮູ້ຄວາມແຕກຕ່າງຂອງຜູ້ອື່ນ. ເມື່ອເຮົາບໍ່ສາມາດເຂົ້າໃຈເຖິງຄວາມເຊື່ອຂອງພວກເຂົາ, ຢ່າງໜ້ອຍພວກເຮົາຕ້ອງໃສ່ໃຈໃນຄວາມຖືກຕ້ອງຂອງເຂົາ. ມັນຄວນຈະມີອົງປະກອບໜຶ່ງເພື່ອຄົ້ນພົບຄວາມເປັນຕົວຕົນຂອງເຂົາ!

## ບົດສະເໜີ ທີ່ສີ່: ເພີ່ມທະວີສາຍສຳພັນທີ່ດີເພື່ອກຽມຕົວສູ່ສັນຕິສຸກ

*ພຣະເຢຊູເຈົ້າບໍ່ຊົງອາຍທີ່ຈະເອີ້ນເຂົາເຫຼົ່ານັ້ນວ່າເປັນພີ່ນ້ອງກັນ (ເຮບູ 2:11-12)*

*ພຣະເຢຊູຊົງຕຣັດວ່າ: ພວກທ່ານມີອາຈານຄົນດຽວກັນ, ແລະ ພວກທ່ານຕ່າງກໍເປັນພີ່ນ້ອງກັນ. ແລະບໍ່ຄວນເອີ້ນຜູ້ໃດໃນໂລກນີ້ວ່າເປັນບິດາ, ເພາະທ່ານມີພຣະບິດາອົງດຽວ ຜູ້ສະຖິດຢູ່ສະຫວັນ. (ມັດທາຍ 23:8-9). ພຣະອົງຍັງຊົງຕຣັດອີກວ່າ: ຜູ້ໃດທີ່ກະທຳຕາມພຣະປະສົງຂອງພຣະບິດາເຈົ້າສະຫວັນ ຜູ້ນັ້ນແມ່ນພີ່ນ້ອງຂອງເຮົາ (ມັດທາຍ 12:50)*

*ຈະມີຜູ້ມາຈາກທິດຕາເວັນອອກ, ຕາເວັນຕົກ, ເໜືອແລະໃຕ້, ແລະຈະມາເອນກາຍລົງໃນອານະຈັກຂອງພຣະເຈົ້າ (ລູກາ 13:29)*

ການມີສ່ວນຮ່ວມໃນການສ້າງສັນຕິ ແລະ ຄວາມເປັນທຳໃນລະດັບສາກົນ ແມ່ນອີກຫົນທາງໜຶ່ງຂອງຄວາມຫວັງທີ່ພວກເຮົາສາມາດເຮັດໄດ້ໃນປະຈຸບັນ. ສັນຕິສຸກບົນແຜ່ນດິນເກີດຂຶ້ນໃນດວງໃຈຂອງແຕ່ລະຄົນ. ເຊິ່ງເລີ່ມຈາກການປ່ຽນແປງທາງດ້ານຈິດໃຈຂອງພວກເຮົາເອງ, ແລະການປ່ຽນແປງນີ້ມັນກໍລວມເຖິງການໂອ້ລົມສົນທະນາ - ປ່ອຍໃຫ້ພຣະຈິດຂອງພຣະເຈົ້າສະຖິດຢູ່ກັບເຮົາ, ຕ້ອນຮັບສັນຕິສຸກທີ່ຈະກະຈາຍອອກໄປ ແລະ ເປັນຜູ້ທີ່ສື່ສານໃຫ້ຄົນອື່ນໄດ້ຮັບຮູ້. "ມີຄວາມສະຫງົບສຸກໃນໃຈ ເຊິ່ງຈະເຮັດໃຫ້ຜູ້ຄົນຈຳນວນມາກມາຍທີ່ຢູ່ອ້ອມຂ້າງເຮົາປອດໄພ." (Seraphim of Sarov, a Russian monk, 1759–1833.)

ໃນຊີວິດຂອງເຮົາເອງ, ໃຫ້ພວກເຮົາຂຽນເລື່ອງລາວສະບັບໃໝ່ກ່ຽວກັບການສ້າງຄວາມສາມັກຄີແບບງ່າຍດາຍ ທີ່ເກີນກວ່າອັນກັ້ນບັງແລະກຳແພງ: ກຳແພງຖືກສ້າງຂຶ້ນທົ່ວທຸກມຸມໂລກ ຄືດັ່ງກຳແພງແຫ່ງການປ່ອຍປະລະເລີຍ, ອັກຄະຕິ ແລະ ອຸດົມການ. ໃຫ້ພວກເຮົາເປີດດວງໃຈຍອມຮັບວັດທະນະທຳ ແລະ ແນວຄວາມຄິດອື່ນໆນຳ.

ພວກເຮົາບໍ່ສາມາດລົກລ້ຽງການບໍ່ຍອມຮັບຄົນແປກໜ້າທີ່ຈະເຂົ້າມາໃນໃຈເຮົາໄດ້, ການປະຕິເສດຜູ້ອື່ນແມ່ນເມັດພືດຂອງຄວາມບໍ່ມີວັດທະນະທຳ. ແທນທີ່ຈະເບິ່ງຄົນແປກໜ້າວ່າເປັນໄພອັນຕະລາຍຕໍ່ການດຳລົງຊີວິດຫຼືວັດທະນະທຳຂອງເຮົາ, ພວກເຮົາສາມາດຕ້ອນຮັບພວກເຂົາຄືດັ່ງສະມາຊິກຄົນໜຶ່ງໃນຄອບຄົວຫຼືບໍ? ເປັນຫຍັງຈຶ່ງບໍ່ພາກັນໄປຢ້ຽມຢາມຜູ້ອົບພະຍົບ, ງ່າຍໆພຽງເພື່ອທຳຄວາມຮູ້ຈັກນຳເຂົາ ແລະ ຮັບຟັງເລື່ອງລາວຂອງເຂົາ? ໃຜຈະຮູ້? ບາງເທື່ອກ້າວຕໍ່ໄປມັນອາດຈະສ້າງຄວາມເປັນໜຶ່ງດຽວກໍ່ເປັນໄດ້.

ພວກເຮົາຈະທຳຄວາມຮູ້ຈັກຄົນອື່ນຜູ້ທີ່ແຕກຕ່າງຈາກເຮົາໄດ້ແນວໃດ? ແລະແບ່ງປັນນຳຜູ້ທີ່ທີແນວຄວາມຄິດຕ່າງຈາກເຮົາ, ໃນການສົນທະນາມັນຈະເປັນຫົນທາງໜຶ່ງທີ່ພວກເຮົາສາມາດຮັບຟັງກັນແລະກັນ, ໂດຍປາສະຈາກການຜິດຖຽງກັນ ກ່ອນທີ່ເຮົາຈະທຳຄວາມເຂົ້າໃຈຄົນອື່ນ. ພວກເຮົາສາມາດຊອກຫາຫົນທາງທີ່ຈະຢືນຢັດໃນບ່ອນທີ່ແຕກແຍກ, ແລະສ້າງຂົວເຊື່ອມຕໍ່ໄດ້ບໍ? ໃຫ້ພວກເຮົາພາວະນາສຳລັບຜູ້ທີ່ເຮົາບໍ່ເຂົ້າໃຈເຂົາ ແລະ ເຂົາກໍ່ບໍ່ເຂົ້າໃຈເຮົາ.

ສັນຍານແຫ່ງຄວາມສາມັກຄີສາມາດແຕກຂະຫຍາຍໄປສູ່ສາດສະໜາອື່ນ. ປະຊຸມກັບຜູ້ທີ່ມີຄວາມເຊື່ອອື່ນໆ(ສາດສະໜາອື່ນ) ເພື່ອໃຫ້ພວກເຮົາສາມາດເປີດແນວຄວາມຄິດແລະຄວາມຮູ້ດ້ານຫຼັກຄວາມເຊື່ອໃຫ້ເລິກເຊິ່ງຂຶ້ນ, ໃຫ້ພວກເຮົາຖາມພຣະເຈົ້າວ່າພຣະອົງຕ້ອງການບອກຫຍັງກັບເຮົາ ແລະ ປະທານຫຍັງໃຫ້ເຮົາໂດຍຜ່ານບັນດາພີ່ນ້ອງທີ່ມີຄວາມແຕກຕ່າງຈາກເຮົານີ້.

# ສຽງຮຽກເອີ້ນບັນດາຜູ້ນຳພຣະກຣິສຕະຈັກສຳລັບປີ 2017

## *ເດີນທາງຮ່ວມກັນ!*

ໃນປີ 2017, ນິກາຍໂປຼເຕັສຕັງໄດ້ສະຫຼອງຄົບຮອບ 500ປີ ເຊິ່ງໄດ້ຖືໂອກາດນີ້ ໃນການກ້າວເດີນໄປຂ້າງໜ້າໃນດ້ານຄວາມເປັນໜຶ່ງດຽວ ແລະ ມິດຕະພາບ.

ແນ່ນອນຢູ່ແລ້ວມັນຈະມີຄວາມແຕກຕ່າງກັນລະຫວ່າງ ພຣະກຣິ້ສຕະຈັກໃນນິກາຍຕ່າງໆ, ແມ້ແຕ່ພຣະກຣິສຕະຈັກດຽວກັນ. ຄວາມແຕກຕ່າງເຫຼົ່ານີ້ຍັງຄົງເຫຼືອໄວ້ເຊິ່ງການເວົ້າກົງໄປກົງມາ; ແຕ່ໃນພຣະກຣິສຕະຈັກທັງໝົດທັງມວນ, ຍ້ອນເວລາຜ່ານໄປພາບລັກທາງສາດສະໜາໄດ້ຮັບຄວາມສຳຄັນຫຼາຍຂຶ້ນ: ຜູ້ຄົນໄດ້ເອີ້ນຕົນເອງວ່າເປັນ ໂປຼເຕັສຕັງ, ກາໂທລິກ ຫຼື ອໍໂຕດ໋ອກ. ເວລານັ້ນໆບໍ່ໄດ້ສຳຄັນສຳລັບຄວາມເປັນຄຣິສຕຽນທີ່ສະແດງຜ່ານທາງສິນລ້າງບາບເລີຍບໍ?

ຄຳຖາມທີ່ຕາມມາແມ່ນ: ບັນດາພຣະກຣິສຕະຈັກຕ່າງໆກ້າທີ່ຈະຢູ່ພາຍໃຕ້ຫຼັງຄາດຽວ ໂດຍປາສະຈາກການລໍຖ້າການຕົກລົງກ່ຽວກັບຄຳຖາມເທວະວິທະຍາ? ຫຼືຢ່າງໜ້ອຍມາຮ່ວມເຕັ້ນດຽວກັນ, ກ້າວເດີນໄປນອກເໜືອຄວາມເປັນໜຶ່ງດຽວເພື່ອສ້າງກິດຈະກຳແລະຊອກຫົນທາງ, ເຖິງແມ່ນວ່າມັນຈະເປັນສິ່ງຊົ່ວຄາວ (ສະເພາະກິດ) ແຕ່ມັນກໍ່ສະແດງໃຫ້ເຫັນເຖິງຄວາມເປັນໜຶ່ງດຽວ ແລະ ໃຫ້ສັນຍານຂອງພຣະກຣິສຕະຈັກຂອງພຣະເຈົ້າ, ຮ່າງກາຍຂອງພຣະເຢຊູ, ຄວາມເປັນໜຶ່ງດຽວຂອງພຣະຈິດເຈົ້າ.

ຄວາມເປັນໜຶ່ງດຽວຂອງບັນດາຜູ້ທີ່ຮັກພຣະເຢຊູສາມາດສ້າງຂຶ້ນໄດ້ ຖ້າພວກເຮົາເຖົາລົບຄວາມແຕກຕ່າງຂອງກັນແລະກັນ; ແຕ່ຄວາມເປັນໜຶ່ງດຽວນີ້ສາມາດເຊື່ອຖືໄດ້ກໍຕໍ່ເມື່ອມັນປະຈັກໃຫ້ເຫັນ. ພວກເຮົາຕ້ອງການຈຸດເລີ່ມຕົ້ນໃໝ່ ເພື່ອກ້າວໄປຫາການຄືນດີໃນຄວາມແຕກຕ່າງຂອງພວກເຮົາ. ຈຸດເລີ່ມຕົ້ນດັ່ງກ່າວແມ່ນ ອີງພຣະຄຣິສ, ຜູ້ທີ່ບໍ່ມີຄວາມແຕກແຍກ. “ຍ້ອນອີງພຣະຄຣິສເທົ່ານັ້ນທີ່ເຮັດໃຫ້ພວກເຮົາເປັນອ້າຍ ເອື້ອຍ ນ້ອງກັນ… ຍ້ອນພຣະອົງຄວາມເປັນພີ່ນ້ອງກັນຂອງພວກເຮົາຈຶ່ງມີຢູ່ຈິງ, ສົມບູບແບບ ແລະ ຕະຫຼອດເວລາ” (Dietrich Bonhoeffer).

ໃນທາງນີ້ ເຮົາສາມາດຮູ້ແຈ້ງເຖິງການແບ່ງປັນພຣະຄຸນພຣະພອນໄດ້ເຊັ່ນ: ແບ່ງປັນກັບຄົນອື່ນໃນສິ່ງທີ່ພວກເຮົາເຫັນວ່າມັນແມ່ນພຣະພອນຈາກພຣະເຈົ້າ, ແຕ່ກໍ່ຕ້ອງຍອມຮັບຄຸນຄ່າຕ່າງໆທີ່ພຣະເຈົ້າປະທານໃຫ້ຄົນອື່ນເຊັ່ນກັນ.  “ມັນບໍ່ເປັນພຽງແຕ່ການຮັບເອົາຂໍ້ມູນຄົນອື່ນເພື່ອໃຫ້ຮູ້ຈັກເຂົາດີຂຶ້ນເທົ່ານັ້ນ, ແຕ່ເພື່ອຍອມຮັບໃນສິ່ງທີ່ພຣະຈິດເຈົ້າຊົງປະທານໃຫ້ເຂົາ ຄືດັ່ງພຣະພອນທີ່ເຮົາໄດ້ຮັບເຊັ່ນກັນ” (ສັນຕະປະປາ ຟຣານຊິສໂກ).

ພວກເຮົາຈະສາມາດຢູ່ຮ່ວມກັນພາຍໃຕ້ຫຼັງຄາດຽວກັນໄດ້ແນວໃດ? ພວກເຮົາຈະຮ່ວມເດີນທາງນຳກັນໄດ້ແນວໃດ? ນີ້ແມ່ນບາງຂໍ້ສະເໜີ: ບັນດາສະມາຊິກໃນຄອບຄົວ ແລະ ເພື່ອນບ້ານຜູ້ນັບຖືຄົນລະນິກາຍ,ໃຫ້ລວມຕົວກັນຄືດັ່ງ “ຮາກຫຍ້າ”, ພາວະນາຮວມກັນໂດຍການຟັງພຣະວາຈາຂອງພຣະເຈົ້າ, ໃນຄວາມມິດງຽບແລະໃນການສັນເສີນ, ຊ່ວຍເຫຼືອກັນແລະກັນ, ທຳຄວາມຮູ້ຈັກເຊິ່ງກັນແລະກັນຫຼາຍຂຶ້ນກວ່າເກົ່າ.

ໃນແຕ່ລະຊຸມຊົນທ້ອງຖິ່ນ, ທຸກໆໂບດຫຼືຄະນະສົງ, ຄວນກະທຳກັບຄຣິສຕຽນຄືກັນກັບນິກາຍອື່ນໆ ເຊິ່ງມີຄວາມເປັນໄປໄດ້ທີ່ຈະເຮັດຮວມກັນ - ການສຶກສາພຣະຄຳພີ, ເຮັດວຽກທາງສັງຄົມແລະວຽກອະພິບານ, ສອນຄຳສອນ - ແລະບໍ່ຄວນເຮັດສິ່ງໃດທີ່ສ້າງຄວາມລຳບາກໃຫ້ຜູ້ອື່ນ. ຜູ້ທີ່ເຮັດວຽກຄ້າຍຄືກັນກໍສາມາດເຮັດວຽກຮ່ວມກັນໄດ້.

ການຮວມກັນການກະທຳເພື່ອຄວາມປອງດອງ, ການໃສ່ໃຈໃນຄວາມລຳບາກຂອງຄົນອື່ນ, ເພື່ອລຸດຜ່ອນຄວາມທຸກໂສກ, ເພື່ອຊະຕາກຳຂອງຊາວອົບພະຍົບ, ເພື່ອຄວາມຍາກຈົນທາງວັດຖຸ ແລະ ທຸກໆຮູບແບບຂອງຄວາມທໍລະມານ, ຢ່າລືມທີ່ຈະຫ່ວງໄຍສິ່ງແວດດລ້ອມເຊັ່ນດຽວກັນ.

ໃນຫຼາຍໆເມືອງທີ່ໄດ້ເກີດມີຄວາມໄວ້ວາງໃຈກັນພາຍໃນພຣະກຣິສຕະຈັກ, ອາດສະນະວິຫານໃຫຍ່ແລະໂບດຕ່າງໆບໍ່ສາມາດເປັນສະຖານທີ່ທີ່ໃຊ້ສວດພາວະນາຂອງຄົນຄຣິສຕຽນທີ່ອາໄສໃນພື້ນທີ່ນັ້ນໆບໍ?

ກ້າວໄປຫາການສົນທະນາເລື່ອງເທວະວິທະຍາ ໃນຂະນະທີ່ມີການປັບປຸງຮູບແບບຂອງການພາວະນາ ແລະ ການກະຕຸ້ນເຕືອນ

ວ່າພວກເຮົາຢູ່ຮ່ວມກັນແລ້ວ. ເມື່ອພວກເຮົາໃຫຍ່ໃນດ້ານມິດຕະພາບ ແລະ ການພາວະນາຮອມກັນແລ້ວ, ຄຳຖາມດ້ານເທວະວິທະຍາຈະກັບກາຍເປັນສິ່ງທີ່ງ່າຍດາຍ.

ເຖິງແມ່ນວ່າຄຣິສຕຽນທັງໝົດຈະໄດ້ຮັບສິດທິໃນວຽກອະພິບານໃນການເບິ່ງແຍງກັນແລະກັນ, ແຕ່ພຣະກຣິສຕະຈັກຍັງຄົງຕ້ອງການຜູ້ຮັບຜິດຊອບຄວາມເປັນໜຶ່ງດຽວໃນທຸກໆລະດັບ. ວຽກງານການປົກຄອງໃນລະດັບສາກົນໄດ້ເປັນວັດທະນະທຳທີ່ມີສາຍພົວພັນກັບສົມເດັດພຣະສັນຕະປະປາ. ບັນດາພຣະກຣິສຕະຈັກທັງຫຼາຍບໍ່ສາມາດປ່ຽນແປງຮູບແບບການປົກຄອງດ້ວຍຕົວເຂົາເອງໄດ້ບໍ? ສັນຕະປະປາບໍ່ສາມາດເປັນທີ່ຍອມຮັບຈາກຜູ້ອື່ນ ວ່າເປັນຜູ້ຮັບໃຊ້ຜູ້ເຊິ່ງເບິ່ງແຍງຄວາມປອງດອງຂອງເອື້ອຍເອື້ອຍນ້ອງໃນຄວາມຫຼາກຫຼາຍຂອງພວກເຂົາບໍ?

ພຣະກຣິສຕະຈັກຄວນຈະເນັ້ນຄວາມສາມັກຄີໃນຄວາມເຊື່ອແລະຂໍ້ຕົກລົງໃນການປົກຄອງເປັນສິ່ງຈຳເປັນເພື່ອທີ່ຈະໄດ້ເປັນໜຶ່ງດຽວຮ່ວມກັນ ໃຫ້ຄວາມເທົ່າທຽມກັນເພື່ອຄວາມສາມັກຄີໃນຄວາມຮັກ?

ພວກເຂົາຈະບໍ່ມອບສິນມະຫາສະໜິດແກ່ຜູ້ທີ່ໂຫຍຫາຄວາມເປັນໜຶ່ງດຽວ ແລະ ຜູ້ທີ່ເຊື່ອວ່າມີພຣະເຢຊູສະຖິດຢູ່ໃນສິນທະຫາສະໜິດຈິງບໍ? ສິນມະຫາສະໜິດແມ່ນສຸດຍອດຂອງຄວາມເປັນໜຶ່ງດຽວ; ແລະກໍເປັນຫົນທາງທີ່ຈະນຳພາເຮົາໄປ.

ພາບລັກຂອງຄວາມເປັນຄຣິສຕຽນຂອງພວກເຮົາແມ່ນສ້າງຂຶ້ນພາຍໃຕ້ການເດີນທາງຮອມກັນແລະບໍ່ແຍກຈາກກັນ. ພວກເຮົາຈະມີກຳລັງໃຈໃນການມາຮອມຕົວກັນພາຍໃຕ້ຫຼັງຄາດຽວ, ເພື່ອວ່າຄວາມຫຼາກຫຼາຍແລະຄວາມຈິງຂອງພຣະອາຈາສາມາດເປີດເຜີຍໄດ້?

## ສາມັກຄີກ້າວໄປຂ້າງໜ້າຂອງປະເທດໃນທະວີບຢູໂຣບ

## *ເມື່ອມີການອົບພະຍົບ, ໃຫ້ພວກເຮົາກ້າວໄປໄກກວ່າຄວາມຢ້ານກົວ!*

ກອງປະຊຸມທີ່ເມືອງ ຣີກ້າ ທີ່ຈັດຂຶ້ນໂດຍເທ່ເຊ້ ໃນທ້າຍເດືອນທັນວາ 2016 ໂດຍການເຂົ້າຮ່ວມຂອງໄວໜຸ່ມຈາກບັນດາປະເທດຢູໂຣບ. ເຊິ່ງມາຈາກບັນດາປະເທດທີ່ເປັນສະມາຊິກຂອງສະຫະພາບຢູໂຣບ ແລະ ບັນດາປະເທດທີ່ບໍ່ໄດ້ເປັນສະມາຊິກ, ພວກເຂົາໄດ້ມີປະສົບການຄວາມເປັນໜຶ່ງຂອງບັນດາປະຊາກອນທີ່ມາຈາກທະວີບດຽວກັນ.

ການຊຸມນຸມກັນຄັ້ງນີ້ຍັງເຮັດໃຫ້ຄົນຈາກຂົງເຂດອື່ນຄົ້ນພົບລັດບອນຕິກຂອງຢູໂຣບ, ທີ່ເປັນອີກເຂດໜຶ່ງທີ່ມີຄວາມງາມທີ່ຫຼາກຫຼາຍຂອງຜູ້ຄົນໃນທະວີບນີ້, ທີ່ມີປະຫວັດສາດ, ວັດທະນະທຳປະເພນີ ແລະ ລັກສະນະສະເພາະຂອງຕົນເອງ.

ຄວາມສັນຕິໃນອະນາຄົດຮຽກຮ້ອງໃຫ້ປະຊາຊາດຢູໂລບໃຫ້ຕື່ນຕົວແລະກໍ່ໃຫ້ເກີດຄວາມສາມັກຄີລະຫວ່າງທຸກໆປະເທດໃນທະວີບຢູໂຣບ. ເພີ່ມທະວີການຕິດຕໍ່, ຮູບແບບການແບ່ງປັນ ແລະ ການປະສານງານໃຫ້ເປັນຮູບປະທຳ.

ມີສິ່ງດຽວທີ່ສາມາດສ້າງຄວາມເປັນໜຶ່ງດຽວພາຍໃນນັ້ນກໍຄື ການໂອ້ລົມສົນທະນາໃຫ້ຫຼາຍຂຶ້ນ ແລະຮັບຟັງກັນແລະກັນ: ບັນດາປະເທດຊະມາຊິແລະບໍ່ເປັນສະມາຊິກຂອງສະຫະພາບຢູໂຣບ, ຜູ້ທີ່ຢູ່ຢູໂຣບຕາເວັນຕົກ ແລະ ຢູໂຣບກາງ ແລະ ຢູໂຣບຕາເວັນອອກ, ຢູໂຣບເໜືອ ແລະ ຢູໂຣບໃຕ້. ແຕ່ລະປະເທດ, ບໍ່ວ່າຈະໃຫຍ່ຫຼືນ້ອຍ, ຄວນຈະມີສິດມີສຽງ, ໃນຄວາມເປັນຕົວຕົນຂອງເຂົາ. ມັນເປັນສິ່ງສຳຄັນທີ່ຈະພະຍາຍາມເຂົ້າໃຈທາງໃນຈິດໃຈຂອງຄົນອື່ນ: ມີພຽງຫົນທາງນີ້ເທົ່ານັ້ນທີ່ຈະສາມາດຢຸດຢັ້ງຄວາມບາດໝາງ ແລະ ເພີ່ມທະວີຄວາມເຂົ້າໃຈ ແລະຫຼີກລ້ຽງຄວາມຄຽດຊັງ.

ບັນດາປະຊາຊາດຢູໂຣບສາມາດຄົ້ນພົບຮາກເຫງົ້າຂອງຄວາມຄ້າຍຄືກັນຫຼາຍກວ່າຄວາມແຕກຕ່າງບໍ?

ໃນຊ່ວງຫຼັງສົງຄາມໂລກຄັ້ງທີ່ 2, ຢູໂຣບພັດທະນາແຮງພັກດັນໃຫ້ເກີດມີການປານີປານອມ. ຈາກນັ້ນ, ຫຼັງຈາກການປະລາໄຊຢູ່ເບີລິນ, ມັນໄດ້ເກີດມີສັກກະລາດໃໝ່ແຫ່ງການຄົ້ນຫາຄວາມເປັນໜຶ່ງດຽວ. ໄວໜຸ່ມຈຳນວນມາກມາຍຮູ້ສຶກວ່າຢູໂຣບຈະ

ພັດທະນາໄດ້ກໍ່ຕໍ່ເມື່ອພວກເຮົາສາມາດເຂົ້າເຖິງຄວາມເປັນພີ່ນ້ອງກັນ. ພວກເຂົາບໍ່ພຽງຕ້ອງການຄວາມສາມັກຄີລະຫວ່າງຢູໂຣບເອງ ແຕ່ຍັງເປີດປະຕູສູ່ທະວີບອື່ນໆ ແລະ ໃນຄວາມເປັນໜຶ່ງດຽວກັບປະຊາຊົນທີ່ກຳລັງປະເຊີນກັບຄວາມຍາກລຳບາກທີ່ສຸດ.

ທົ່ວທຸກມຸມໂລກ, ບໍ່ວ່າຈະແມ່ນຊາຍ, ຍິງ ແລະ ເດັກນ້ອຍໄດ້ຖືກບັງຄັບໃຫ້ໜີອອກຈາກປະເທດຂອງຕົນ. ມັນເປັນສິ່ງທີ່ທໍລະມານຫຼາຍທີ່ເຮັດໃຫ້ພວກເຂົາຕ້ອງໄດ້ອອກໄປ. ແຮງຈູງໃຈນີ້ເປັນສິ່ງທີ່ແຂງແກ່ນກວ່າອຸປະສັກທັງໝົດທີ່ຖືກສ້າງຂຶ້ນມາຂວາງກັ້ນຫົນທາງຂອງເຂົາ. ຄວາມວິຕົກກັງວົນທີ່ສະແດງອອກໃນພາກພື້ນທີ່ລ້ຳລວຍ ຈະບໍ່ຊ່ວຍຜູ້ທີ່ກາລັງຕົກທຸກໄດ້ຍາກທີ່ກຳລັງທໍລະມານກັບການອອກຈາກບ້ານເກີດເມືອງນອນ.

ບາງຄົນກໍ່ເວົ້າວ່າ, "ພວກເຮົາບໍ່ສາມາດຕ້ອນຮັບໝົດທຸກຄົນໄດ້."ບາງຄົນກໍ່ຄິດວ່າການຍົກຍ້າຍປະຊາກອນເປັນສິ່ງທີ່ຫຼີກລ້ຽງບໍ່ໄດ້, ເນື່ອງຈາກພວກເຂົາຖືກກະທົບຈາກເຫດການທີ່ສຸດທີ່ຈະທົນ. ເພື່ອພະຍາຍາມຄວບຄຸມການເຄື່ອນຍ້າຍເຫຼົ່ານີ້ໃຫ້ຖືກຕ້ອງຕາມກົດໝາຍ. ເພື່ອປະໃຫ້ຄົນອົບພະຍົບຕົກໃນກຳມືຂອງຜູ້ລັກລອບເອົາຄົນເຂົ້າເມືອງ ແລະ ມີຄວາມສ່ຽງທີ່ຈະເສຍຊີວິດໃນເມດີເຕລະນຽນ ໃນການປະເຊີນກັບຄຸນຄ່າຂອງຄວາມເປັນມະນຸດ.

ບັນດາປະເທດທີ່ລ້ຳລວຍບໍ່ສາມາດແບ່ງປັນຄວາມຮັບຜິດຊອບຕໍ່ກັບບາດແຜໃນປາງສົງຄາມ ແລະ ຜົນກະທົບທາງສິ່ງແວດລ້ອມທີ່ກໍ່ໃຫ້ເກີດການອົບພະຍົບທີ່ໃຫຍ່ຫຼວງ - ຈາກອາຟຼິກກາ, ຕາເວັນອອກກາງ, ອາເມລິກາກາງ ແລະ ພາກພື້ນອື່ນໆເຊັ່ນກັນ. ປະຈຸບັນການກຳນົດທາງເລືອກດ້ານການເມືອງແລະເສດຖະກິດແມ່ນຂຶ້ນກັບບັນດາປະເທດທີ່ລ້ຳລວຍທີ່ສາມາດສ້າງຄວາມບໍ່ແນ່ນອນໃນຂົງເຂດອື່ນໄດ້. ເຖິງແມ່ນວ່າການຍົກຍ້າຍຂອງຜູ້ອົບພະຍົບກໍ່ໃຫ້ເກີດຄວາມຍາກລຳບາກ, ແຕ່ການມາຂອງພວກເຂົາອາດຈະເປັນໂອກາດໜຶ່ງທີ່ຈະເຮັດໃຫ້ຢູໂຣບໄດ້ມີການປ່ຽນແປງທາງດ້ານການເປີດອົກເປີດໃຈ ແລະ ຄວາມເປັນປຶກແຜ່ນ.

ມັນມີບາງສະຖານທີ່ທີ່ຈຳນວນຜູ້ອົບພະຍົກມີຢ່າງຫຼວງຫຼາຍ ທີ່ເຮັດໃຫ້ປະຊາຊົນໃນທີ່ນັ້ນມີຈຳນວນລົ້ນຫຼາມ ແລະ ເມື່ອຍລ້າ ແລະນີ້ເປັນສິ່ງທີ່ເຂົ້າໃຈໄດ້. ຄວາມທໍລະມານນີ້ມັນຍິ່ງໃຫຍ່ຫຼາຍສຳລັບພວກເຂົາ, ເນື່ອງຈາກບັນດາປະເທດໃນຢູໂຣບຍັງບໍ່ໄດ້ຫາຫົນທາງທີ່ຈະແກ້ໄຂຮ່ວມກັນເທື່ອ. ແຕ່ກໍມີຫຼາຍໆຄົນທີ່ມີຄວາມໃຈກວ້າງຕ້ອນຮັບຜູ້ອົບພະຍົບ ແລະ ສາມາດຄົ້ນພົບວ່າ ການພົວພັນກັນແບບສ່ວນຕົວສາມາດນຳໄປສູ່ຄວາມເຂົ້າໃຈທີ່ງົດງາມໄດ້.

ບໍ່ມີຫຍັງທີ່ຈະມາແທນທີ່ສາຍພົວພັນນີ້ໄດ້. ເຊິ່ງນີ້ເປັນຄວາມຈິງໂດຍສະເພາະຢ່າງຍິ່ງກັບສາສໜາ ອິສລາມ. ຄົນມຸດສະລິມ ແລະ ຄຣິສຕຽນສາມາດຝຶກຫັດແບບເຂົາໄດ້ເຊັ່ນກັນ ເພື່ອເປັນພະຍານແຫ່ງຄວາມສັນຕິຮ່ວມກັນ ແລະ ເພື່ອຢັບຢັ້ງຄວາມບໍ່ສະເໝີພາບແລະຄວາມຮຸຸນແຮງຮ່ວມກັນ ໃນນາມຂອງພຣະເປັນເຈົ້າ. ໃນ800ປີທີ່ຜ່ານມາ, ນັກບຸນ ຟຣານຊິສແຫ່ງອາຊີຊີ, ໃນຄວາມປະສົງທີ່ທ່ານຈາກມີສ່ວນຮ່ວມໃນການສ້າງຄວາມສັນຕິ, ທ່ານບໍ່ໄດ້ລັງເລໃຈທີ່ຈະເດີນທາງໄປປະເທດອີຢີບເພື່ອພົບຊຸນຕ່ານ. ນັກບຸນເທເລຊາແຫ່ງກາລກາຕ້າໄດ້ອຸທິດຊີວິດເພິ່ນເພື່ອຄົນທຸກຈົນ ບໍ່ວ່າຈະເປັນຄົນເຊື້ອຊາດໃດ.

ບັນດາປະເທດທີ່ຢູ່ທະວີບຢູໂຣບທີ່ຕ້ອງການແຍກຕົນເອງອອກຈາກໝູ່ ຈະບໍ່ມີອານາຄົດ. ທ່າມກາງປະເທດຢູໂຣບເອງ ກໍຄືສາຍສຳພັນກັບຄົນອົບພະຍົບ, ມິດຕະພາບ ແລະ ການສະໜັບສະໜູນ ເຊິ່ງນັ້ນມັນແມ່ນສ່ວນໜຶ່ງທີ່ຈະຕຽມຕົວສູ່ຄວາມສັນຕິ.